ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 258 /ລບ
ນະຄອນຫຼວງວຽງຈັນ, ວັນທີ 23.08.2023

# ດຳລັດ
# ວ່າດ້ວຍກອງທຶນເລືອດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍອົງການກາແດງລາວ ສະບັບເລກທີ 28/ສພຊ, ລົງວັນທີ 31 ຕຸລາ 2017;
- ອີງຕາມ ໜັງສືສະເໜີ ຂອງອົງການກາແດງແຫ່ງຊາດລາວ ສະບັບເລກທີ 0195/ກດລ, ລົງວັນທີ 07 ສິງຫາ 2023.

## ລັດຖະບານ ອອກດຳລັດ

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ກ່ຽວກັບການຄຸ້ມຄອງ, ນຳໃຊ້ ແລະ ຕິດຕາມ ກວດກາ ກອງທຶນເລືອດ ເພື່ອເຮັດໃຫ້ກອງທຶນດັ່ງກ່າວ ເຄື່ອນໄຫວຢ່າງມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນການສະໜອງເລືອດໃຫ້ແກ່ຄົນເຈັບຢ່າງພຽງພໍ, ປອດໄພ ແລະ ທັນເວລາ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ກອງທຶນເລືອດ

ກອງທຶນເລືອດ ຂຽນຫຍໍ້ວ່າ: **"ກທລ"**, ເປັນພາສາອັງກິດວ່າ **Blood Fund "BF"** ແມ່ນກອງທຶນທີ່ສ້າງຂຶ້ນ ເພື່ອລະດົມ ແລະ ສະສົມທຶນຈາກແຫຼ່ງຕ່າງໆ ແນໃສ່ຮັບປະກັນໃຫ້ມີທຶນພຽງພໍ ແລະ ຍືນຍົງ ເພື່ອນຳໃຊ້ເຂົ້າໃນການປຸກລະດົມຂົນຂວາຍບໍລິຈາກເລືອດ ແລະ ສະໜອງເລືອດທີ່ປອດໄພ.

### ມາດຕາ 3 ການອະທິບາຍສັບ

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄ່າຊົດເຊີຍການບໍລິການເລືອດ** ໝາຍເຖິງ ຈຳນວນເງິນຄ່າອຸປະກອນ ແລະ ນ້ຳຢາກວດວິເຄາະເລືອດ ໂດຍເກັບຈາກຄົນເຈັບ, ຄອບຄົວ ຫຼື ຍາດພີ່ນ້ອງຂອງຄົນເຈັບ ຕາມການຕົກລົງຂອງລັດຖະບານ;

2. **ເລືອດທີ່ພຽງພໍ** ໝາຍເຖິງ ຈຳນວນເລືອດທີ່ໄດ້ຮັບບໍລິຈາກ ຢ່າງໜ້ອຍ 1% (ໜຶ່ງສ່ວນຮ້ອຍ) ຂອງຈຳນວນພົນລະເມືອງໃນປະເທດ ຕາມມາດຕະຖານຂັ້ນຕ່ຳ ທີ່ອົງການອະນາໄມໂລກ ກຳນົດໄວ້;

3. **ເລືອດທີ່ປອດໄພ** ໝາຍເຖິງ ເລືອດທີ່ໄດ້ຈາກຜູ້ທີ່ສະໝັກໃຈ ແລະ ມີຄວາມສ່ຽງຕໍ່າ ໂດຍຜ່ານການກວດວິເຄາະ ແລະ ເກັບຮັກສາ ຢ່າງເປັນລະບົບຄົບຊຸດ;

4. **ການບໍລິຈາກເລືອດ** ໝາຍເຖິງ ການສະຫຼະເລືອດ ດ້ວຍຄວາມສະໝັກໃຈ ເພື່ອສະໜອງໃຫ້ແກ່ຄົນເຈັບ;

5. **ການປຸກລະດົມຂົນຂວາຍບໍລິຈາກເລືອດ** ໝາຍເຖິງ ຂະບວນການຈັດຫາຜູ້ບໍລິຈາກເລືອດແບບສະໝັກໃຈ ດ້ວຍການໂຄສະນາ, ເຊີນຊວນ, ສ້າງຈິດສໍານຶກ, ສ້າງຄວາມເຂົ້າໃຈ ແລະ ຄວາມຮູ້ກ່ຽວກັບເລືອດ ແລະ ການບໍລິຈາກເລືອດ ເພື່ອສະໜອງເລືອດໃຫ້ແກ່ຄົນເຈັບທີ່ຂາດເລືອດ;

6. **ການກວດວິເຄາະເລືອດ** ໝາຍເຖິງ ການກວດວິເຄາະຕົວຢ່າງເລືອດທຸກຖົງ ເຊັ່ນ ກວດໝວດເລືອດລະບົບເອບີໂອ (ABO), ໝວດເລືອດລະບົບເຣຊຸສ(Rhesus), ກວດກັ່ນຕອງຫາທາດກາຍຕ້ານ (Antibody Screening), ເຊື້ອພະຍາດນໍາສົ່ງທາງເລືອດ ແລະ ຄວາມເຂົ້າກັນໄດ້ຂອງເລືອດ ລະຫວ່າງ ຜູ້ໃຫ້ ແລະ ຜູ້ຮັບ;

7. **ການເກັບຮັກສາເລືອດ** ໝາຍເຖິງ ການເກັບຮັກສາເລືອດໃຫ້ຢູ່ໃນອຸນຫະພູມທີ່ຖືກຕ້ອງ ເລີ່ມແຕ່ຂັ້ນຕອນຮັບບໍລິຈາກ ຈົນຮອດ ການນໍາສົ່ງໃຫ້ຄົນເຈັບທີ່ຂາດເລືອດ;

8. **ການແຍກສ່ວນປະກອບເລືອດ** ໝາຍເຖິງ ການແຍກເລືອດລວມ ອອກເປັນສ່ວນປະກອບຂອງເລືອດ ເຊັ່ນ: ເມັດເລືອດແດງເຂັ້ມຂຸ້ນ, ເມັດເລືອດນ້ອຍເຂັ້ມຂຸ້ນ, ປະລັດສະມາສົດແຊ່ແຂງ, ໄຄຣໂອພີຊີພິເທດ;

9. **ການຄຸ້ມຄອງຄຸນນະພາບເລືອດ** ໝາຍເຖິງ ການຮັບປະກັນຄຸນນະພາບການບໍລິການເລືອດ ໃຫ້ໄດ້ຕາມມາດຕະຖານທີ່ກໍານົດໄວ້.

**ມາດຕາ 4 ຫຼັກການຄຸ້ມຄອງ ແລະ ນໍາໃຊ້ ກອງທຶນເລືອດ**

ການຄຸ້ມຄອງ ແລະ ນໍາໃຊ້ ກທລ ໃຫ້ປະຕິບັດ ຕາມຫຼັກການ ດັ່ງນີ້:

1. ລວມສູນ ແລະ ເປັນເອກະພາບ ຕາມລະບົບງົບປະມານແຫ່ງລັດ;
2. ຮັບປະກັນການນໍາໃຊ້ ກທລ ໃຫ້ຖືກຕ້ອງຕາມເປົ້າໝາຍ, ປະຢັດ, ມີປະສິດທິພາບ ແລະ ຍືນຍົງ
3. ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທໍາ, ໂປ່ງໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້;
4. ທຸກລາຍຮັບ, ລາຍຈ່າຍ ຕ້ອງຜ່ານລະບົບການບັນທຶກບັນຊີ ພ້ອມທັງມີການຕິດຕາມ, ກວດກາ ແລະ ການກວດສອບ ຢ່າງເປັນປົກກະຕິ ຕາມກົດໝາຍ.

**ມາດຕາ 5 ຂອບເຂດການນໍາໃຊ້ດໍາລັດ**

ດໍາລັດສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທັງພາກລັດ ແລະ ເອກະຊົນ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານ ກທລ ຢູ່ ສປປ ລາວ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນໍາໃຊ້ ກອງທຶນເລືອດ

**ມາດຕາ 6 ແຫຼ່ງລາຍຮັບຂອງກອງທຶນເລືອດ**

ແຫຼ່ງລາຍຮັບຂອງ ກທລ ໄດ້ມາຈາກ:

1. ງົບປະມານແຫ່ງລັດ ຕາມການຈັດສັນງົບປະມານປະຈໍາປີ;

2. ການປະກອບສ່ວນດ້ວຍຄວາມສະໝັກໃຈ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

3. ຄ່າຊົດເຊີຍການບໍລິການເລືອດ;

4. ການເຄື່ອນໄຫວທາງດ້ານວິຊາການ ແລະ ການຈັດກິດຈະກຳລະດົມທຶນ;

5. ລາຍຮັບຈາກການບໍລິຫານ ແລະ ດອກເບ້ຍເງິນຝາກ ກທລ;

6. ລາຍຮັບອື່ນ ທີ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 7 ເປົ້າໝາຍການນຳໃຊ້ກອງທຶນເລືອດ**

ກທລ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການປຸກລະດົມຂົນຂວາຍ ແລະ ຮັບບໍລິຈາກເລືອດ;

2. ການກວດວິເຄາະເລືອດ;

3. ການເກັບຮັກສາ, ແຍກສ່ວນປະກອບ ແລະ ຄຸ້ມຄອງຄຸນນະພາບເລືອດ;

4. ການສະໜອງເລືອດທີ່ພຽງພໍ, ປອດໄພ ແລະ ທັນເວລາ;

5. ການສ້າງກິດຈະກຳ ລະດົມທຶນ;

6. ການຄຸ້ມຄອງ ແລະ ບໍລິຫານ ກທລ;

7. ເປົ້າໝາຍອື່ນ ກ່ຽວກັບການປຸກລະດົມບໍລິຈາກເລືອດ ແລະ ສະໜອງເລືອດທີ່ປອດໄພ ຕາມການຕົກລົງຂອງສະພາບໍລິຫານ ກທລ.

**ມາດຕາ 8 ການເປີດບັນຊີເງິນຝາກກອງທຶນເລືອດ**

ກທລ ແຕ່ລະຂັ້ນ ຕ້ອງມີລະບົບບັນຊີທີ່ຖືກຕ້ອງ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ຕ້ອງເປີດບັນຊີເງິນຝາກ ໃນລະບົບຄັງເງິນແຫ່ງຊາດ ແລະ/ຫຼື ທະນາຄານທຸລະກິດ ທີ່ມີຄວາມໝັ້ນຄົງ ແລະ ເຊື່ອຖືໄດ້ ຢູ່ ສປປ ລາວ ຕາມການເຫັນດີຂອງຂະແໜງການການເງິນ. ທຸກແຫຼ່ງລາຍຮັບຂອງ ກທລ ຕ້ອງໂອນເຂົ້າໃນບັນຊີເງິນຝາກດັ່ງກ່າວ.

**ມາດຕາ 9 ການເບີກຈ່າຍເງິນກອງທຶນເລືອດ**

ການເບີກຈ່າຍເງິນອອກຈາກບັນຊີເງິນຝາກ ຢູ່ຄັງເງິນແຫ່ງຊາດ ຫຼື ທະນາຄານທຸລະກິດ ຕ້ອງປະຕິບັດຕາມແຜນງານ, ໂຄງການ ແລະ ກິດຈະກຳ ທີ່ຜ່ານການພິຈາລະນາ ແລະ ອະນຸມັດ ຈາກສະພາບໍລິຫານ ກທລ ແລະ ໄດ້ຂຶ້ນແຜນຖືກຕ້ອງ ຕາມການບັນຊີແຫ່ງລັດ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 10 ການຂໍນຳໃຊ້ກອງທຶນເລືອດ**

ສະຖາບັນເລືອດແຫ່ງຊາດ, ສູນເລືອດແຂວງ, ຫ້ອງການກາແດງເມືອງ, ເທດສະບານ, ນະຄອນ ຕ້ອງເປັນເຈົ້າການ ເກັບກຳຂໍ້ມູນ ແລະ ສັງລວມຄວາມຈຳເປັນ ພ້ອມທັງສ້າງແຜນການນຳໃຊ້ ກທລ ແຕ່ລະໄລຍະ ຕາມລະບຽບການ ແລ້ວສະເໜີຕໍ່ສະພາບໍລິຫານ ກທລ ຂັ້ນຂອງຕົນ ພິຈາລະນາ.

ລາຍລະອຽດ ກ່ຽວກັບ ຂັ້ນຕອນ ແລະ ວິທີການ ຂໍນຳໃຊ້ ກທລ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 11 ການອະນຸມັດນຳໃຊ້ກອງທຶນເລືອດ

ສະພາບໍລິຫານ ກທລ ແຕ່ລະຂັ້ນ ເປັນຜູ້ອະນຸມັດການນຳໃຊ້ກອງທຶນ ຖ້າເຫັນວ່າ ການສະເໜີຂໍນຳໃຊ້ ກທລ ນັ້ນ ຫາກຖືກຕ້ອງຕາມເປົ້າໝາຍຂອງການນຳໃຊ້ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ປະຕິບັດຖືກຕ້ອງຕາມການບັນຊີແຫ່ງລັດ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 12 ການຖອນເງິນກອງທຶນ

ການຖອນເງິນຈາກບັນຊີເງິນຝາກຂອງ ກທລ ຕ້ອງມີສອງລາຍເຊັນຂອງຜູ້ສັ່ງຈ່າຍ ທີ່ໄດ້ຮັບມອບສິດຈາກສະພາບໍລິຫານ ກທລ ແລະ ຕ້ອງຢູ່ໃນແຜນກິດຈະກຳທີ່ໄດ້ຮັບອະນຸມັດ ເທົ່ານັ້ນ.

ການຖອນເງິນຈາກບັນຊີເງິນຝາກ ບໍ່ໃຫ້ເກີນລາຍຮັບທັງໝົດຂອງ ກທລ ໃນແຕ່ລະປີງົບປະມານ. ເງິນຂອງ ກທລ ບໍ່ສາມາດຖອນໄດ້ທັງໝົດ ແລະ ຕ້ອງຮັກສາໄວ້ ຢ່າງໜ້ອຍ ສິບສ່ວນຮ້ອຍ (10%) ຂອງຈຳນວນເງິນໃນບັນຊີເງິນຝາກຂອງ ກທລ.

## ໝວດທີ 3
## ການຄຸ້ມຄອງບໍລິຫານ ກອງທຶນເລືອດ

### ມາດຕາ 13 ທີ່ຕັ້ງຂອງກອງທຶນເລືອດ

ກທລ ແຕ່ລະຂັ້ນ ມີທີ່ຕັ້ງ ດັ່ງນີ້:

1. ຂັ້ນສູນກາງ ຕັ້ງຢູ່ອົງການກາແດງແຫ່ງຊາດລາວ;
2. ຂັ້ນແຂວງ ຕັ້ງຢູ່ອົງການກາແດງແຂວງ;
3. ຂັ້ນເມືອງ ຕັ້ງຢູ່ຫ້ອງການກາແດງ ເມືອງ, ເທດສະບານ, ນະຄອນ.

### ມາດຕາ 14 ໂຄງປະກອບການຈັດຕັ້ງຂອງກອງທຶນເລືອດ

ໂຄງປະກອບການຈັດຕັ້ງຂອງ ກທລ ແຕ່ລະຂັ້ນ ມີ ດັ່ງນີ້:

1. ສະພາບໍລິຫານ ກທລ;
2. ກອງເລຂາ ກທລ.

### ມາດຕາ 15 ສະພາບໍລິຫານກອງທຶນເລືອດ

ສະພາບໍລິຫານ ກທລ ແມ່ນການຈັດຕັ້ງທີ່ບໍ່ປະຈຳການ ມີພາລະບົດບາດຮັບຜິດຊອບການເຄື່ອນໄຫວວຽກງານຂອງ ກທລ. ສະພາບໍລິຫານ ກທລ ປະກອບດ້ວຍ ປະທານ, ຮອງປະທານ ແລະ ຄະນະກຳມະການຈຳນວນໜຶ່ງ ທີ່ມາຈາກພາກສ່ວນ ທີ່ກ່ຽວຂ້ອງ.

ສະພາບໍລິຫານ ກທລ ຂັ້ນສູນກາງ ຖືກແຕ່ງຕັ້ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີ ຂອງປະທານອົງການກາແດງແຫ່ງຊາດລາວ. ສະພາບໍລິຫານ ກທລ ແຂວງ ຖືກແຕ່ງຕັ້ງ ໂດຍເຈົ້າແຂວງ ຕາມການສະເໜີ ຂອງຫົວໜ້າອົງການກາແດງແຂວງ. ສະພາບໍລິຫານ ກທລ ເມືອງ, ເທດສະບານ, ນະຄອນ ຖືກແຕ່ງຕັ້ງ ໂດຍເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະໜີຂອງຫົວໜ້າຫ້ອງການກາແດງເມືອງ, ເທດສະບານ, ນະຄອນ.

ສະພາບໍລິຫານ ກທລ ແຕ່ລະຂັ້ນ ມີອາຍຸການ ຫ້າ ປີ ແລະ ສາມາດຕໍ່ໄດ້ອີກ.

**ມາດຕາ 16 ໂຄງປະກອບບຸກຄະລາກອນສະພາບໍລິຫານກອງທຶນເລືອດ**

ສະພາບໍລິຫານ ກທລ ຂັ້ນສູນກາງ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ປະທານອົງການກາແດງແຫ່ງຊາດລາວ ເປັນປະທານ;
2. ຮອງປະທານອົງການກາແດງແຫ່ງຊາດລາວ ເປັນຮອງປະທານ ທັງເປັນຜູ້ປະຈຳການ;
3. ຫົວໜ້າກົມງົບປະມານ, ກະຊວງການເງິນ ເປັນຮອງປະທານ;
4. ຫົວໜ້າຫ້ອງການ ອົງການກາແດງແຫ່ງຊາດລາວ ເປັນຄະນະ;
5. ຕາງໜ້າ ກະຊວງສາທາລະນະສຸກ ເປັນຄະນະ;
6. ຕາງໜ້າ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຄະນະ;
7. ຕາງໜ້າ ຜູ້ຊົງຄຸນວຸດທິກາແດງແຫ່ງຊາດລາວ ເປັນຄະນະ;
8. ຫົວໜ້າສະຖາບັນເລືອດແຫ່ງຊາດ ອົງການກາແດງແຫ່ງຊາດລາວ ເປັນຄະນະ ທັງເປັນຫົວໜ້າກອງເລຂາ.

ສຳລັບໂຄງປະກອບບຸກຄະລາກອນ ຂອງສະພາບໍລິຫານ ກທລ ແຂວງ, ເມືອງ, ເທດສະບານ, ນະຄອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ບຸກຄະລາກອນຂອງສະພາບໍລິຫານ ກທລ ຈະບໍ່ໄດ້ຮັບເງິນເດືອນ ແລະ ຄ່າແຮງງານ ຈາກ ກທລ ໃນການປະຕິບັດໜ້າທີ່ຂອງຕົນ ນອກຈາກເບ້ຍປະຊຸມ ຫຼື ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຂອງກະຊວງການເງິນ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານກອງທຶນເລືອດ**

ສະພາບໍລິຫານ ກທລ ແຕ່ລະຂັ້ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ ແລະ ບໍລິຫານ ກທລ ລວມທັງຈັດຕັ້ງປະຕິບັດການປຸກລະດົມບໍລິຈາກເລືອດ ແລະ ສະໜອງເລືອດປອດໄພ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ພິຈາລະນາ ແລະ ຮັບຮອງກົດລະບຽບພາຍໃນ, ແຜນການເຄື່ອນໄຫວ, ບົດລາຍງານ, ແຜນງົບປະມານປະຈຳປີຂອງ ກທລ;

3. ພິຈາລະນາ ແລະ ຮັບຮອງ ແຜນງານ, ໂຄງການ ແລະ ກິດຈະກຳຂອງ ກທລ;

4. ນຳພາ ຊີ້ນຳ ປຸກລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນ ຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;

5. ແຕ່ງຕັ້ງກອງເລຂາ ກທລ;

6. ພິຈາລະນາ ຮັບຮອງເອົາລະບຽບການກ່ຽວກັບການຄຸ້ມຄອງ ແລະ ການເຄື່ອນໄຫວຂອງ ກທລ;

7. ຄົ້ນຄວ້າ, ພິຈາລະນາອະນຸມັດການນຳໃຊ້ ກທລ;

8. ຕິດຕາມ, ກວດກາ ແລະ ປະເມີນຜົນ ການນຳໃຊ້ ກທລ ຕາມເປົ້າໝາຍການນຳໃຊ້, ແຜນການ, ແຜນງົບປະມານ ເພື່ອໃຫ້ມີຄວາມໂປ່ງໃສ, ມີປະສິດທິພາບ ແລະ ປະສິດທິຜົນ;

9. ຮັບຮອງຜົນການກວດສອບທາງການເງິນຂອງ ກທລ;

10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ກທລ ຕໍ່ຂັ້ນເທິງຂອງຕົນ ຢ່າງໜ້ອຍ ປີລະຄັ້ງ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 18 ກອງປະຊຸມສະພາບໍລິຫານກອງທຶນເລືອດ**

ສະພາບໍລິຫານ ກທລ ຈັດກອງປະຊຸມສະໄໝສາມັນ ຂອງຕົນຂຶ້ນ ຢ່າງໜ້ອຍປີລະຄັ້ງ. ໃນກໍລະນີ ຈຳເປັນ ແລະ ຮີບດ່ວນ ກໍສາມາດຈັດກອງປະຊຸມສະໄໝວິສາມັນຂຶ້ນໄດ້ທຸກເວລາ ໂດຍການຮຽກປະຊຸມ ຂອງປະທານສະພາບໍລິຫານ ກທລ ຫຼື ຕາມການສະເໜີຂອງສະມາຊິກສະພາບໍລິຫານ ກທລ ຢ່າງໜ້ອຍ ໜຶ່ງສ່ວນສາມ ຂອງຈຳນວນສະມາຊິກສະພາບໍລິຫານ ກທລ. ກອງປະຊຸມ ຈະເປີດຂຶ້ນໄດ້ ກໍຕໍ່ເມື່ອ ມີ ສະມາຊິກສະພາບໍລິຫານ ກທລ ເຂົ້າຮ່ວມ ຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນສະມາຊິກທັງໝົດ.

ມະຕິກອງປະຊຸມສະພາບໍລິຫານ ກທລ ໃຫ້ຖືເອົາຕາມສຽງສ່ວນຫຼາຍ, ໃນກໍລະນີມີສຽງເທົ່າກັນ ໃຫ້ຖືເອົາຄຳເຫັນຂອງປະທານເປັນອັນຊີ້ຂາດ, ແຕ່ຄຳເຫັນຂອງສຽງສ່ວນໜ້ອຍ ກໍຕ້ອງບັນທຶກໄວ້ເປັນຂໍ້ມູນ.

ໃນກໍລະນີ ປະທານສະພາບໍລິຫານ ກທລ ບໍ່ຢູ່ ຫຼື ຕິດຂັດ ແມ່ນໃຫ້ຮອງປະທານ ຜູ້ຖືກມອບໝາຍ ເປັນຜູ້ປະຕິບັດໜ້າທີ່ແທນ.

**ມາດຕາ 19 ກອງເລຂາກອງທຶນເລືອດ**

ກອງເລຂາ ກທລ ແມ່ນການຈັດຕັ້ງທີ່ເຮັດໜ້າທີ່ປະຈຳການປົກກະຕິ ແລະ ເປັນເສນາທິການ ໃຫ້ແກ່ ສະພາບໍລິຫານ ກທລ ໃນການຄຸ້ມຄອງບໍລິຫານ ກທລ.

ກອງເລຂາ ກທລ ຂັ້ນສູນກາງ ກຳນົດເອົາ ສະຖາບັນເລືອດແຫ່ງຊາດ, ຂັ້ນແຂວງ ກຳນົດເອົາສູນເລືອດ ແຂວງ ແລະ ຂັ້ນເມືອງ ກຳນົດເອົາ ຫ້ອງການກາແດງເມືອງ, ເທດສະບານ, ນະຄອນ ເປັນບ່ອນປະຕິບັດໜ້າທີ່ ຄຸ້ມຄອງບໍລິຫານ ກທລ ຊຶ່ງປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ໜຶ່ງຫາສອງຄົນ ແລະ ມີພະນັກງານ ຊ່ວຍວຽກຈຳນວນໜຶ່ງ ທີ່ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍສະພາບໍລິຫານ ກທລ ແລະ ມີອາຍຸການເທົ່າກັບ ສະພາບໍລິຫານ ກທລ.

**ມາດຕາ 20 ສິດ ແລະ ໜ້າທີ່ຂອງກອງເລຂາ**

ກອງເລຂາ ກທລ ແຕ່ລະຂັ້ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ສະພາບໍລິຫານ ກທລ ໃນການຄຸ້ມຄອງ ແລະ ບໍລິຫານການເຄື່ອນໄຫວ ວຽກງານ ແລະ ບັນຊີ-ການເງິນ ຂອງ ກທລ;

2. ຄົ້ນຄ້ວາ, ສ້າງ ກົດລະບຽບພາຍໃນ, ແຜນການເຄື່ອນໄຫວ ແລະ ແຜນງົບປະມານປະຈຳປີ ເພື່ອ ສະເໜີສະພາບໍລິຫານ ກທລ ພິຈາລະນາ;

3. ຄົ້ນຄວ້າ, ສ້າງ ແຜນງານ, ໂຄງການ ແລະ ກິດຈະກຳ ສະເໜີຕໍ່ສະພາບໍລິຫານ ກທລ ພິຈາລະນາ;

4. ຄົ້ນຄ້ວາ, ສ້າງ ລະບຽບການ ກ່ຽວກັບການຄຸ້ມຄອງ, ບໍລິຫານ ກທລ ແລ້ວສະເໜີຕໍ່ສະພາ ບໍລິຫານ ກທລ ພິຈາລະນາ;

5. ໂຄສະນາ ເຜີຍແຜ່ລະບຽບການ ກ່ຽວກັບ ກທລ;

6. ຄຸ້ມຄອງ ແລະ ບໍລິຫານ ການເຄື່ອນໄຫວວຽກງານ ຂອງ ກທລ ໃຫ້ສອດຄ່ອງກັບເປົ້າໝາຍດ້ວຍ ຄວາມຄວາມໂປ່ງໃສ ແລະ ມີປະສິດທິຜົນ;

7. ສຶກສາ, ຄົ້ນຄວ້າ ວິທີການ ແລະ ຮູບແບບ ໃນການລະດົມທຶນ ຈາກພາຍໃນ ແລະ ຕ່າງປະເທດ ລວມທັງ ຈັດຕັ້ງກິດຈະກຳລະດົມທຶນ ແລະ ຊອກຫາແຫຼ່ງທຶນເຂົ້າ ກທລ;

8. ບັນທຶກ, ຈົດຮັບ, ຈົດຈ່າຍ ເງິນ ກທລ, ຄຸ້ມຄອງຊັບສິນ, ເງິນ ທີ່ໄດ້ຮັບຈາກການປະກອບສ່ວນ ແລະ ແຫຼ່ງລາຍຮັບຕ່າງໆ ພ້ອມທັງຄຸ້ມຄອງບັນຊີເງິນຝາກຂອງ ກທລ ດ້ວຍຄວາມໂປ່ງໃສ ແລະ ສາມາດກວດສອບໄດ້;

9. ເບີກຈ່າຍເງິນ ແລະ ວັດຖຸປະກອນ ເພື່ອສະໜອງໃຫ້ແກ່ການເຄື່ອນໄຫວກິດຈະກຳຕ່າງໆ ຕາມແຜນການທີ່ຖືກຮັບຮອງ;

10. ຕິດຕາມ, ກວດກາ ແລະ ປະເມີນຜົນການນຳໃຊ້ເງິນ ແລະ ວັດຖຸປະກອນ ຂອງພາກສ່ວນຕ່າງໆ ທີ່ໄດ້ຮັບອະນຸມັດ;

11. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານ ກທລ;

12. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງ ກທລ ຕໍ່ສະພາບໍລິຫານ ກທລ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງສະພາບໍລິຫານ ກທລ.

## ໝວດທີ 4
## ການກວດສອບ, ການກວດກາ ແລະ ການລາຍງານ

### ມາດຕາ 21 ການກວດສອບບັນຊີ

ບັນຊີຂອງ ກທລ ແຕ່ລະຂັ້ນ ຕ້ອງໄດ້ຮັບການກວດສອບ ທຸກປີ ໂດຍອົງການກວດສອບແຫ່ງລັດ. ຜົນການກວດສອບ ຕ້ອງໄດ້ຮັບການຢັ້ງຢືນໂດຍສະພາບໍລິຫານ ກທລ ແລະ ລາຍງານໃຫ້ອົງການກາແດງລາວຂັ້ນຂອງຕົນ ພ້ອມທັງເຜີຍແຜ່ໃຫ້ສາທາລະນະຊົນຮັບຮູ້ ເພື່ອຄວາມໂປ່ງໃສໃນການນຳໃຊ້ເງິນຂອງ ກທລ.

ໃນກໍລະນີ ພົບເຫັນມີການລະເມີດກົດໝາຍ ແລະ ລະບຽບການ, ຜູ້ລະເມີດນັ້ນ ຈະຖືກປະຕິບັດມາດຕະການ ຕາມແຕ່ລະກໍລະນີ ທີ່ກຳນົດໄວ້ໃນກົດໝາຍ.

### ມາດຕາ 22 ການກວດກາ

ການກວດກາ ກທລ ແຕ່ລະຂັ້ນ ແມ່ນການປະເມີນຜົນການນຳໃຊ້ ກທລ ເພື່ອຮັບປະກັນຄວາມໂປ່ງໃສ, ມີປະສິດທິພາບ, ປະສິດທິຜົນ, ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ.

ການກວດກາ ກທລ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດ ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ກທລ;

2. ແຫຼ່ງລາຍຮັບ, ການຈັດຕັ້ງປະຕິບັດແຜນລາຍຈ່າຍ ກທລ;

3. ກວດກາການຈັດຕັ້ງປະຕິບັດວຽກງານ ຂອງ ກອງເລຂາ ກທລ ແລະ ການປະຕິບັດນະໂຍບາຍຕ່າງໆ.

### ມາດຕາ 23 ຮູບການກວດກາ

ການກວດກາ ກທລ ມີຮູບການ ດັ່ງນີ້:

1. ກວດກາ ຕາມລະບົບປົກກະຕິ ແມ່ນການກວດກາ ທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດກາ ນອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າ;

3. ກວດກາ ແບບກະທັນຫັນ ແມ່ນການກວດກາ ໂດຍຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າ;

ໃນການດຳເນີນການກວດ ເຈົ້າໜ້າທີ່ກວດກາ ຕ້ອງປະຕິບັດໜ້າທີ່ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

**ມາດຕາ 24 ການລາຍງານ**

ກອງເລຂາ ກທລ ແຕ່ລະຂັ້ນ ຕ້ອງລາຍງານ ກ່ຽວກັບການ ຄຸ້ມຄອງ ແລະ ນຳໃຊ້ ກທລ ລວມທັງ ລາຍຮັບ, ລາຍຈ່າຍ ປະຈຳໄຕມາດ, ຫົກເດືອນ ແລະ ປະຈຳປີ ໃຫ້ສະພາບໍລິຫານ ກທລ ຂັ້ນຂອງຕົນ ເພື່ອ ຮັບຮອງ ແລະ ລາຍງານ ຂັ້ນເທິງຂອງຕົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 25 ຕາປະທັບ**

ກທລ ມີຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 26 ການຈັດຕັ້ງປະຕິບັດ**

ອົງການກາແດງແຫ່ງຊາດລາວ ເປັນເຈົ້າການໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດ ສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງ ຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 27 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 23 ສິງຫາ 2023 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ສອນໄຊ ສີພັນດອນ**